## ພວກເຮົາຕ້ອງການຈື່ຫຍັງ?

**ຂ້ອຍຕ້ອງເຮັດຫຍັງເພື່ອຊ່ວຍໃຫ້ລູກຂອງຂ້ອຍຈະເລີນເຕີບໂຕ ແລະ ຮຽນຮູ້?**

**ແມ່ນຫຍັງຄືຂໍ້ດີ ແລະ ໂອກາດຂອງລູກຂອງຂ້າພະເຈົ້າສໍາລັບການຈະເລີນເຕີບໂຕ?**

# ແຜນຜັງການຕັດສິນໃຈເພື່ອຄັດເລືອກລາຍງານການອະທິບາຍ (ການຈົດບັນທຶກ)

### ແຜນຜັງການຕັດສິນໃຈແມ່ນຫຍັງ?

ແຜນຜັງການຕັດສິນໃຈແມ່ນເຄື່ອງມືທີ່ທີມ IFSP ນໍາໃຊ້ເພື່ອຊ່ວຍຄັດເລືອກລາຍງານທີ່ອະທິບາຍວ່າ ລູກຂອງເຈົ້າກໍາລັງເປັນແນວໃດໃນສາມຂົງເຂດ:

1. ຄວາມສໍາພັນດ້ານບວກໃນສັງຄົມ
2. ການຮຽນຮູ້ ແລະ ການນໍາໃຊ້ທັກສະໃໝ່
3. ການດໍາເນີນການເພື່ອບັນລຸຄວາມຕ້ອງການຂອງພວກເຂົາ

### ສິ່ງທີ່ຕ້ອງຈື່ເມື່ອກໍາລັງນໍາໃຊ້ເຄື່ອງມືນີ້

ຄິດເຖິງວິທີທີ່ເດັກນ້ອຍຈະນໍາໃຊ້ທັກສະຕາມໜ້າທີ່ເພື່ອມີສ່ວນໃນກິດຈະກໍາໃນສະຖານທີ່ງແຕກຕ່າງກັນ ແລະ ກັບຜູ້ຄົນທີ່ແຕກຕ່າງກັນ.

ລາຍງານທີ່ທີມເລືອກຄວນສະທ້ອນເຖິງການປະຕິບັດໜ້າທີ່ຂອງລູກຂອງທ່ານ ໂດຍອີງຕາມ:

- ຄວາມຄາດໝາຍສໍາລັບລູກຂອງເຈົ້າໃນສະພາບແວດລ້ອມໃດໜຶ່ງ. ນໍາໃຊ້ຄວາມຄາດໝາຍຂອງວັດທະນະທໍາໃນເຮືອນຂອງເຈົ້າເພື່ອຕັດສິນໃຈວ່າ ລູກຂອງເຈົ້າກໍາລັງປະຕິບັດໜ້າທີ່ໃນລະດັບທີ່ຖືກຄາດໝາຍໄວ້ສໍາລັບຊ່ວງອາຍຸຂອງພວກເຂົາໃນເຮືອນ ຫຼື ບໍ່.
- ການທີ່ພວກເຂົານໍາໃຊ້ເຕັກໂນໂລຊີອໍານວຍຄວາມສະດວກ/ການປັບໃຊ້ (ອຸປະກອນຊ່ວຍໃນການຟັງ, ແວ່ນຕາ, ອຸປະກອນຊ່ວຍໃນການເຄື່ອນໄຫວ, ອື່ນໆ) ເມື່ອມັນມີຢູ່ທົ່ວໄປ. ການປະຕິບັດໜ້າທີ່ຕົວຈິງຂອງພວກເຂົາໃນສະພາບແວດລ້ອມທັງໝົດ, ບໍ່ແມ່ນການປະຕິບັດໜ້າທີ່ພາຍໃຕ້ສະຖານະການຈໍາລອງ ຖ້າລາວມີເຕັກໂນໂລຊີ.
- ອາຍຸຕາມເວລາຂອງລູກຂອງເຈົ້າ ເຖິງແມ່ນວ່າພວກເຂົາເກີດກ່ອນກໍານົດ.

**ໃຫ້ເລີ່ມຕົ້ນດ້ວຍຄໍາຖາມທໍາອິດ: ເດັກນ້ອຍເຄີຍນໍາໃຊ້ທັກສະຕາມໜ້າທີ່ງເປັນໄປຕາມຄາດໝາຍຂອງຊ່ວງອາຍຸໃນພື້ນທີ່ຕອບຮັບນີ້ບໍ?**

**ແມ່ນ** | **ບໍ່ແມ່ນ**

## *ຖ້າເຈົ້າຕອບວ່າ "ບໍ່ແມ່ນ" ສຳລັບ ຄຳຖາມທຳອິດ...*

ໃນພື້ນທີ່ນີ້, ______________ ນຳໃຊ້ **ທັກສະຕາມໜ້າທີ່** ຄືກັບ ເດັກນ້ອຍ **ທີ່ອາຍຸຕ່ຳກວ່າຫຼາຍ** ຫຼື ເດັກນ້ອຍ **ທີ່ອາຍຸຂ້ອນຂ້າງຕ່ຳກວ່າ ໃນສະພາບແວດລ້ອມ ແລະ ສະຖານະການທັງໝົດ?**

**ເດັກນ້ອຍທີ່ອາຍຸສູງກວ່າຫຼາຍ**

ໃນລະຫວ່າງແບບແຜນປະຈຳວັນ ແລະ ກິດຈະກຳທີ່ກ່ຽວຂ້ອງກັບພື້ນທີ່ຕອບຮັບນີ້, ລູກຂອງເຈົ້ານຳໃຊ້ທັກສະທີ່ສຳຄັນເຊິ່ງຄ້າຍຄືກັບເດັກນ້ອຍທີ່ອາຍຸຕ່ຳກວ່າຫຼາຍ.

**ເດັກນ້ອຍທີ່ອາຍຸຂ້ອນຂ້າງຕ່ຳກວ່າ**

ພວກເຂົາກຳລັງນຳໃຊ້ທັກສະຂອງເດັກນ້ອຍທີ່ຂ້ອນຂ້າງອາຍຸຕ່ຳກວ່າຈົນຮອດລະດັບໃດ?

ໃນລະຫວ່າງແບບແຜນປະຈຳວັນ ແລະ ກິດຈະກຳທີ່ກ່ຽວຂ້ອງກັບພື້ນທີ່ຕອບຮັບນີ້, ໂດຍສ່ວນໃຫຍ່ແລ້ວ ລູກຂອງເຈົ້າກຳລັງນຳໃຊ້ທັກສະທີ່ສຳ ຄັນເຊິ່ງຄ້າຍຄືກັບເດັກນ້ອຍທີ່ອາຍຸຕ່ຳກວ່າຫຼາຍ.

ໃນແບບແຜນປະຈຳວັນ ແລະ ກິດຈະກຳສ່ວນໃຫຍ່ທີ່ກ່ຽວຂ້ອງກັບພື້ນທີ່ຕອບຮັບນີ້, ລູກຂອງເຈົ້າກຳລັງນຳໃຊ້ທັກສະທີ່ເກີດຂຶ້ນກ່ອນທັກສະທີ່ເປັນໄປຕາມຄາດໝາຍຂອງຊ່ວງອາຍຸ. ທັກສະເຫຼົ່ານີ້ແມ່ນຄ້າຍຄືກັບເດັກນ້ອຍທີ່ອາຍຸຂ້ອນຂ້າງຕ່ຳກວ່າ.

## *ຖ້າເຈົ້າຕອບວ່າ "ແມ່ນ" ສຳລັບ ຄຳຖາມທຳອິດ...*

ໃນພື້ນທີ່ນີ້, ______________ ກຳລັງນຳໃຊ້ **ທັກສະຕາມໜ້າທີ່ ເປັນໄປຕາມຄາດໝາຍຂອງຊ່ວງອາຍຸໃນສະພາບແວດລ້ອມ ແລະ ສະຖານະການທັງໝົດ ຫຼື ເກືອບທັງໝົດບໍ?**

**ບໍ່ແມ່ນ**

ຈົນຮອດລະດັບໃດທີ່ພວກເຂົານຳໃຊ້ທັກສະທີ່ເປັນໄປຕາມຄາດໝາຍຂອງຊ່ວງອາຍຸໃນສະພາບແວດລ້ອມແລະ ສະຖານະການທັງໝົດ ຫຼື ເກືອບທັງໝົດ?

ໃນແບບແຜນປະຈຳວັນແລະ ກິດຈະກຳທີ່ກ່ຽວຂ້ອງກັບພື້ນທີ່ຕອບຮັບນີ້, ລູກຂອງເຈົ້າກຳລັງໃຊ້ທັກສະບາງຢ່າງທີ່ເປັນໄປຕາມຄາດໝາຍຂອງຊ່ວງອາຍຸ ແຕ່ໂດຍສ່ວນໃຫຍ່ແລ້ວແມ່ນນຳໃຊ້ທັກສະທີ່ຄ້າຍຄືກັບເດັກນ້ອຍທີ່ອາຍຸຂ້ອນຂ້າງຕ່ຳກວ່າ.

ໃນລະຫວ່າງແບບແຜນປະຈຳວັນ ແລະ ກິດຈະກຳທີ່ກ່ຽວຂ້ອງກັບພື້ນທີ່ຕອບຮັບນີ້, ລູກຂອງເຈົ້າກຳລັງໃຊ້ທັກສາບາງຢ່າງ ເຊິ່ງຄ້າຍຄືກັບເດັກນ້ອຍທີ່ອາຍຸຂ້ອນຂ້າງຕ່ຳກວ່າ ແຕ່ໂດຍສ່ວນໃຫຍ່ແລ້ວແມ່ນນຳໃຊ້ທັກສະທີ່ເປັນໄປຕາມຄາດໝາຍຂອງຊ່ວງອາຍຸ.

**ແມ່ນ**

ຜູ້ໃດມີ ຄວາມກັງວົນກ່ຽວກັບທັກສະຂອງເດັກນ້ອຍໃນພື້ນທີ່ນີ້ບໍ?

**ແມ່ນ**

ໃນລະຫວ່າງແບບແຜນປະຈຳວັນ ແລະ ກິດຈະກຳທີ່ກ່ຽວຂ້ອງກັບພື້ນທີ່ຕອບຮັບນີ້, ລູກຂອງເຈົ້າມີທຸກທັກສະທີ່ພວກເຮົາຄາດຫວັງຈະໄດ້ເຫັນໃນເດັກນ້ອຍທີ່ຢູ່ໃນຊ່ວງອາຍຸຂອງພວກເຂົາ ແລະ ຍັງມີຄວາມກັງວົນບາງຢ່າງ.

**ບໍ່ແມ່ນ**

ໃນລະຫວ່າງແບບແຜນປະຈຳວັນ ແລະ ກິດຈະກຳທີ່ກ່ຽວຂ້ອງກັບພື້ນທີ່ຕອບຮັບນີ້, ລູກຂອງເຈົ້ານຳໃຊ້ທຸກທັກສະທີ່ເປັນໄປຕາມຄາດໝາຍຂອງຊ່ວງອາຍຸ.